ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ສຳເລັດການເປັນປະທານຮ່ວມ ກອງປະຊຸມຄະນະກຳມະການລະດັບສູງວຽກງານການເຊື່ອມໂຍງຂະແໜງການເງິນອາຊຽນ (Senior Level Committee: SLC) ຄັ້ງທີ 24 ແລະ ເຂົ້າຮ່ວມກອງປະຊຸມຄະນະກຳມະການ ສ້າງຄວາມອາດສາມາດ (SCCB) ທີ່ປະເທດສິງກະໂປ



ໃນວັນທີ 17 ຕຸລາ 2022, ຄະນະຂອງທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ເຂົ້າຮ່ວມກອງປະຊຸມຄະນະກຳມະການສ້າງຄວາມອາດສາມາດ (SCCB) ທີ່ປະເທດສິງກະໂປ ໂດຍການເປັນປະທານຂອງທະນາຄານພັດທະນາອາຊີ (ADB) ແລະ ສູນຄົ້ນຄວ້າ ແລະ ຝຶກອົບຮົມທະນາຄານກາງອາຊີຕາເວັນອອກສຽງໃຕ້ (SEACEN) ເພື່ອປຶກສາຫາລືກ່ຽວກັບຜົນການປະເມີນກິດຈະກຳການສ້າງຄວາມອາດສາມາດປະຈຳປີ 2022, ແຜນການສ້າງຄວາມອາດສາມາດປະຈຳປີ 2023 ໃຫ້ແກ່ປະເທດສະມາຊິກອາຊຽນໂດຍອີງຕາມຄວາມຕ້ອງການຂອງບັນດາຄະນະກຳມະການຕ່າງໆຂອງອາຊຽນ. ນອກນີ້, ທີ່ປະຊຸມຍັງໄດ້ສະຫຼຸບງົບປະມານຈັດຝຶກອົບຮົມປະຈຳປີ 2022 ແລະ ແຜນງົບໃນປີ 2023.




ຄຽງຄູ່ກັນນັ້ນ, ໃນວັນທີ 18 ຕຸລາ 2022 ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານກາງສິງກະໂປ ໄດ້ຈັດກອງປະຊຸມຄະນະກຳມະການລະດັບສູງວຽກງານການເຊື່ອມໂຍງຂະແໜງການເງິນອາຊຽນ (Senior Level Committee: SLC) ຄັ້ງທີ 24 (the 24th Meeting of the ASEAN Senior Level Committee for Financial Integration) ທີ່ປະເທດສິງກະໂປ ໃນຮູບແບບຊ່ອງໜ້າຄຽງຄູ່ກັບການຈັດຜ່ານລະບົບທາງໄກ (Video Conference) ໂດຍມີຜູ້ຕາງໜ້າຈາກບັນດາທະນາຄານກາງຂອງປະເທດສະມາຊິກອາຊຽນ, ກອງເລຂາອາຊຽນ (ASEC) ແລະ ອົງການຈັດຕັ້ງສາກົນຄື: ທະນາຄານພັດທະນາອາຊີ (ADB), ແລະ ອົງການຕິດຕາມເສດຖະກິດມະຫາພາກອາຊຽນ+3 (AMRO) ເຂົ້າຮ່ວມໃນກອງປະຊຸມ.

ກອງປະຊຸມດັ່ງກ່າວເປັນປະທານຮ່ວມໂດຍ ທ່ານ ນ. ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທຫລ ແລະ ທ່ານ Leong Sing Chiong, ຮອງຜູ້ວ່າການທະນາຄານກາງສິງກະໂປ. ໃນກອງປະຊຸມໄດ້ຮັບຟັງການລາຍງານສະພາບເສດຖະກິດມະຫາພາກໃນປະຈຸບັນຂອງພາກພື້ນ ແລະ ສາກົນຈາກອົງການຈັດຕັ້ງສາກົນ ພ້ອມທັງໄດ້ຮັບຟັງການລາຍງານຄວາມຄືບໜ້າບັນດາໜ້າວຽກຕ່າງໆທີ່ນອນໃນຂອບວຽກການເຊື່ອມໂຍງຂະແໜງການເງິນອາຊຽນເປັນຕົ້ນແມ່ນແຜນບູລິມະສິດໃນປີ 2022 ຊຶ່ງໄດ້ສຳເລັດເປັນສ່ວນໃຫຍ່ ແລະ ບາງບັນຫາທີ່ຂໍອະນຸມັດເຊັ່ນ: ແຜນບູລິມະສິດປີ 2023 ຂອງບັນດາຄະນະກຳມະການທີ່ຢູ່ພາຍໃຕ້ການຊີ້ນຳຂອງ SLC ຄື: ຄະນະກຳມະການເຊື່ອມໂຍງທະນາຄານ (WC-ABIF), ຄະນະກຳມະການເປີດບັນຊີເສລີທຶນ (WC-CAL), ຄະນະກຳມະການພັດທະນາຕະຫຼາດທຶນ (WC-CMD), ຄະນະກຳມະການເຂົ້າເຖິງການບໍລິການທາງການເງິນ (WC-FINC), ຄະນະກຳມະການເປີດເສລີການບໍລິການທາງການເງິນ (WC-FSL), ຄະນະກຳມະການລະບົບຊຳລະ (WC-PSS), ຄະນະກຳມະການສ້າງຄວາມອາດສາມາດ (SCCB), ແລະ ວຽກງານຂໍ້ລິເລີ່ມຕ່າງໆ.

ກອງປະຊຸມໄດ້ດຳເນີນໄປເປັນເວລາໜຶ່ງວັນເຕັມໂດຍບັນດາປະເທດສະມາຊິກໄດ້ມີການປຶກສາຫາລື ແລະ ປະກອບຄຳເຫັນຢ່າງຟົດຟື້ນໂດຍທີ່ປະຊຸມໄດ້ຮັບຊາບ, ຮັບຮອງບັນຫາຕ່າງໆ ແລະ ໄດ້ໃຫ້ທິດຊີ້ນຳໃນການສືບຕໍ່ດຳເນີນວຽກງານທີ່ນອນໃນຂອບວຽກງານການເຊື່ອມໂຍງຂະແໜງການເງິນອາຊຽນເພື່ອໃຫ້ສາມາດບັນລຸເປົ້າໝາຍທີ່ຂື້ນໄວ້ຂອງແຕ່ລະຄະນະ. ໃນທ້າຍກອງປະຊຸມທະນາຄານແຫ່ງ ສປປ ລາວ ແລະ ທະນາຄານກາງສິງກະໂປ ໃນນາມປະທານຮ່ວມໄດ້ປຶກສາຫາລືກັບສະມາຊິກກ່ຽວກັບການຈັດກອງປະຊຸມ SLC ຄັ້ງທີ 25 ແມ່ນເຫັນດີເປັນເອກະພາບກັນຈັດຢູ່ປະເທດອິນໂດເນເຊຍໂດຍຄາດວ່າຈະຈັດຂຶ້ນໃນເດືອນກຸມພາ ປີ 2023.

**ຂ່າວ ແລະ ພາບໂດຍ: ພະແນກຮ່ວມມືຫຼາຍຝ່າຍ, ກົມຮ່ວມມືສາກົນ**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ**